ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບອັດທະນະຖາວອນ

ແຂວງບໍລິຄຳໄຊ
ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ໂຄງການຄຸ້ມຄອງອ່າງຮັບນ້ຳເທິນ-ນ້ຳກະດິງ
ລະຫັດໂຄງການ WRM021-BLX

ບົດສະຫຼຸບ

ການຈັດຕັ້ງປະຕິບັດວຽກງານຂອງໂຄງການ

ຄຸ້ມຄອງອ່າງຮັບນ້ຳເທິນ-ນ້ຳກະດິງ ແຂວງບໍລິຄຳໄຊ

ປີ 2017

I. ພາກສະເໜີ

ໂຄງການຄຸ້ມຄອງອ່າງຮັບນ້ຳເທີນ-ນ້ຳກະດິງແມ່ນໄດ້ຮັບທຶນຊ່ວຍເຫຼືອລ້າຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ (EPF) ແລະ ແມ່ນຢູ່ໃນຄວາມຮັບຜິດຊອບ ຂອງພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ໂດຍມີຈຸດປະສົງເພື່ອປັບປຸງຄວາມເຂັ້ມແຂງໃນການຄຸ້ມຄອງອ່າງຮັບນ້ຳເທີນ-ນ້ຳກະດິງ ແຂວງບໍລິຄຳໄຊ, ໃຫ້ເກີດມີການຄຸ້ມຄອງແບບປະສົມປະສານ ແລະ ສັງລວມບັນດາໂຄງການພັດທະນາຕ່າງໆ ທີ່ມີພາຍໃນອ່າງຮັບນ້ຳເທີນ-ນ້ຳກະດິງ ເພື່ອໃຫ້ເປັນແຜນຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ,ເຊິ່ງການຈັດຕັ້ງປະຕິບັດໂຄງການແມ່ນ 5 ປີ (2016-2020) ເຊິ່ງປະກອບມີ 3 ອົງປະກອບຄື: ອົງປະກອບທີ1 ແມ່ນສ້າງຄວາມອາດສາມາດໃຫ້ແກ່ພະນັກງານຂັ້ນແຂວງ ແລະ ຂັ້ນເມືອງ, ອົງປະກອບທີ2 ແມ່ນສະໜັບສະໜຸນວຽກງານພາກສະໜາມ,ອົງປະກອບທີ3 ແມ່ນບໍລິຫານ ແລະ ຄຸ້ມຄອງໂຄງການ.

- ເລກທີ່ໂຄງການຍ່ອຍ WRM021-BLX
- ຊື່ໂຄງການຍ່ອຍ: ໂຄງການຄຸ້ມຄອງອ່າງຮັບນ້ຳເທີນ-ນ້ຳກະດິງ ແບບປະສົມປະສານ
- ທີ່ຕັ້ງໂຄງການ:ແຂວງບໍລິຄຳໄຊ (ເມືອງປາກກະດິງ,ຄຳເກີດ,ວຽງທອງ ແລະ ໄຊຈຳພອນ)
- ງົບປະມານທັງໝົດແມ່ນ:1,100,000,000 ກີບ
- ມື້ເລີ່ມໂຄງການ:ວັນທີ 25 ກຸມພາ 2016 ຫາ 25 ກຸມພາ 2020

❖ ກິດຈະກຳຕົ້ນຕໍ ປະກອບມີ:

1. ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂັ້ນແຂວງ ແລະ ຂັ້ນເມືອງ
2. ຈັດກອງປະຊຸມປະຈຳປີ ຂອງຄະນະກຳມະການອ່າງຮັບນ້ຳເທີນ-ນ້ຳກະດິງ
3. ແລກປ່ຽນບົດຮຽນກັບໂຄງການຕ່າງໆທັງພາຍໃນ ແລະ ຕ່າງປະເທດ
4. ຕິດຕາມໂຄງການພັດທະນາຕ່າງໆ ພາຍໃນອ່າງຮັບນ້ຳເທີນ-ນ້ຳກະດິງ ຢ່າງເປັນລະບົບ
5. ຕິດຕາມກວດກາຄຸນນະພາບນ້ຳອ່າງຮັບນ້ຳເທີນ-ນ້ຳກະດິງຈຳນວນ5ຈຸດ,ນ້ຳງຽບ3ຈຸດແລະນ້ຳຊັນ 4ຈຸດ
6. ສະພາບລວມອ່າງຮັບນ້ຳເທີນ-ນ້ຳກະດິງ ແລະ ແຜນຄຸ້ມຄອງອ່າງຮັບນ້ຳແບບປະສົມປະສານ.

➧ ໄລຍະເວລາ ແລະ ງົບປະມານ

1.	ງົບປະມານທັງໝົດ (ທີເຊັນສັນຍາ):	1,100,000,000 ກີບ.
2.	ເງິນທີ່ໄດ້ສະຫຼຸບ:	361,500,000 ກີບ.
3.	ເງິນທີ່ຍັງບໍ່ໄດ້ສະຫຼຸບ:	832,500 ກີບ.
4.	ຊື້ເຄື່ອງທົດລອງ ແລະ ອຸປະກອນ	219,839,700 ກີບ ຈ່າຍໂດຍ (ກປສ)
5.	ເງິນທີ່ຂໍຄ່ຽນໃນປີຕໍ່ໄປ:	146,900,000 ກີບ.
6.	ມື້ສົ່ງບົດລາຍງານການເງິນສຸດທ້າຍ:	7 ພະຈິກ 2017.

ໂດຍອີງຕາມແຜນການສົກປີ 2017 ທີ່ໄດ້ກຳນົດໃນແຜນການ 5 ປີຂອງໂຄງການ ແລະ ແຜນວຽກການເຄື່ອນໄຫວດ້ານວິຊາການແມ່ນໄດ້ດຳເນີນໄປຕາມແຜນການທີ່ກຳນົດໄວ້ໃນແຜນແມ່ບົດ ແລະ ແຜນປະຈຳປີ ໂດຍ ກປສ ໄດ້ໃຫ້ທຶນ ແລະ ສະໜອງທຶນ ເພື່ອໃຫ້ວຽກໄດ້ຈັດຕັ້ງປະຕິບັດຢ່າງທັນການໂດຍມີຜົນສຳເລັດດັ່ງນີ້:

1.1 ເຂົ້າຮ່ວມກອງປະຊຸມຄວາມຄືບໜ້າ ທີ່ແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ສີນນະ ສອນ ແສງຈັນທະວົງ ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຄຳມ່ວນ ໂດຍ ມີຈຸດປະສົງເພື່ອລາຍງານຄວາມຄືບໜ້າຂອງໂຄງການຄຸ້ມຄອງອ່າງຮັບນ້ຳເທີນ-ນ້ຳກະດິງທີ່ໄດ້ຈັດຕັ້ງປະຕິບັດ ຜ່ານມາຂອງ ພາກສ່ວນແຂວງຄຳມ່ວນ ທີ່ໄດ້ຮັບຜິດຊອບ ເຂດ 4ອ່າງຮັບນ້ຳ ຕອນເທິງຂອງ ນ້ຳເທີນ-ນ້ຳກະດິງ ອີງຕາມແຜນທີ່ການປົກຄອງລະຫວ່າງ 2 ແຂວງ ຄືແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ ເພື່ອຊອກຫາວິທີການ ຄຸ້ມຄອງອ່າງຮັບນ້ຳເທີນ-ນ້ຳກະດິງ ແບບປະສົມປະສານ ຮ່ວມກັນເພື່ອໃຫ້ເກີດຄວາມຍືນຍົງໃນອານາຄົດ.

1.2 ໄດ້ລົງສຳຫຼວດ ແລະ ກຳນົດຈຸດກວດກາຄຸນນະພາບນ້ຳພາຍໃນອ່າງຮັບນ້ຳເທີນ-ນ້ຳກະດິງ ເພື່ອ ຕິດຕາມ ແລະ ຊອກຫາທາດປົນເປື້ອນທີ່ອາດຈະສົ່ງຜົນກະທົບຕໍ່ຄຸນນະພາບນ້ຳສາຍນ້ຳເທີນ-ນ້ຳກະດິງ ຂອງແຕ່ ລະເມືອງ ພາຍໃນອ່າງ ເຊິ່ງໄດ້ລົງກຳນົດຈຸດ ໃນວັນທີ 2-12 ກຸມພາ 2017 ໂດຍໄດ້ມີການສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຂອງແຕ່ລະເມືອງ ເພື່ອກຳນົດຈຸດເກັບຕົວຢ່າງນ້ຳຮ່ວມກັນ ແລະ ໄດ້ກຳນົດ ໃນການເກັບຕົວຢ່າງ 5 ຈຸດ ເຊັ່ນ:ຈຸດທີ່1ສາຍນ້ຳພາວ ບ້ານໂພນທອງ,ຈຸດທີ່2 ສາຍນ້ຳງອຍ ປາກນ້ຳງອຍ,ຈຸດທີ່3 ນ້ຳຍ້ອງ ກ້ອງຂົວນ້ຳຍ້ອງ, ຈຸດທີ່4 ນ້ຳກະດິງ ບ້ານ ໂພນງາມ,ຈຸດທີ່5 ນ້ຳກະດິງ ປາກນ້ຳກະດິງ.

1.3 ໃນວັນທີ 7-10 ກຸມພາ 2017 ໄດ້ເຂົ້າຮ່ວມກອງປະຊຸມ ແລະ ຝຶກອົບຮົມໃນການຄຸ້ມຄອງຄຸນ ນະພາບນ້ຳ ທີ່ແຂວງຄຳມ່ວນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ 2 ແຂວງ ຄື:ແຂວງ ຄຳມ່ວນ ແລະ ບໍລິຄຳໄຊ ໃຫ້ມີຄວາມຮູ້ ແລະ ຄວາມສາມາດໃນການຄຸ້ມຄອງ ແລະ ກວດກາ ຄຸນນະພາບນ້ຳ ຕາມສາຍນ້ຳ ຕ່າງໆ,ໂດຍການຝຶກຄັ້ງນີ້ແມ່ນຄູຝຶກມາຈາກສະຖາບັນ ແລະ ກົມຊັບພະຍາກອນນ້ຳ ຜູ້ທີ່ມີປະສົບປະການມາ ກ່ອນ ແລະ ມີຄວາມຊຳນິຊຳນານ ໃນການນຳໃຊ້ອຸປະກອນ ແລະ ເຄື່ອງທົດລອງ ເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ ປະນັກງານ 2 ແຂວງ.

1.4 ໄດ້ລົງຕິດຕາມ ແລະ ກວດກາຄຸນນະພາບນ້ຳຂອງສາຍນ້ຳເທີນ-ນ້ຳກະດິງ ຕາມຈຸດທີ່ໄດ້ກຳນົດໄວ້ ໃນຄັ້ງກ່ອນເພື່ອຊອບຫາທາດ ປົນເປື້ອນທີ່ມາກັບນ້ຳ ແລະ ສາຍເຄມີທີ່ເກີດຈາກໂຄງການພັດທະນາຕ່າງໆ ໃນ ວັນທີ 3 ເມສາ 2017 ພາຍໃນອ່າງຮັບນ້ຳເທີນ-ນ້ຳກະດິງ ຕາມ 5 ຈຸດທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນ ແລະ ມີການ ຕິດຕາມຄຸນນະພາບນ້ຳຈຸດເກົ່າທຸກໆ 3 ເດືອນ ເພື່ອມາສົບທຽບກັນ ເພື່ອເປັນຂໍ້ມູນໃຫ້ແກ່ການພັດທະນາດ້ານ ຕ່າງໆພາຍໃນອ່າງນ້ຳເທີນ-ນ້ຳກະດິງ.

1.5 ໄດ້ລົງສຳຫຼວດ ແລະ ກຳນົດຈຸດກວດກາຄຸນນະພາບນ້ຳ ສາຍນ້ຳຊັນ ເພື່ອຕິດຕາມ ແລະ ຊອກຫາ ທາດປົນເປື້ອນທີ່ອາດຈະສົ່ງຜົນກະທົບຕໍ່ຄຸນນະພາບນ້ຳຊັນ ຂອງສອງເມືອງເຊິ່ງນອນໃນອ່າງຮັບນ້ຳຊັນ ເພື່ອມາ ສົບທຽບກັບນ້ຳເທີນ-ນ້ຳກະດິງວ່າຄຸນນະພາບນ້ຳດັ່ງກ່າວນັ້ນມີຄວາມແຕກຕ່າງກັນຫຼາຍເທົ່າໃດ, ເຊິ່ງໄດ້ລົງ ກຳນົດຈຸດ ໃນວັນທີ 3-8 ເມສາ 2017 ໂດຍໄດ້ມີການສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ບໍລິຄັນ ເພື່ອກຳນົດຈຸດເກັບຕົວຢ່າງນ້ຳຮ່ວມກັນ ແລະ ໄດ້ ກຳນົດ ໃນການເກັບຕົວຢ່າງ 4 ຈຸດ ເຊັ່ນ:ຈຸດທີ່1ສາຍນ້ຳຊັນ ບ້ານທ່າສີ ເມືອງບໍລິຄັນ,ຈຸດທີ່2 ສາຍນ້ຳຊັນ ບ້ານ ແຄນຢ່ອງ ເມືອງບໍລິຄັນ,ຈຸດທີ່3 ສາຍນ້ຳຊັນ ບ້ານສອງຄອນ ເມືອງປາກຊັນ, ຈຸດທີ່4 ສາຍນ້ຳຊັນ ບ້ານປາກຊັນ ເມືອງ ປາກຊັນ.

1.6 ກອງປະຊຸມປະຈຳປີ ແລະ ທົບທວນແຜນຂອງໂຄງການຄຸ້ມຄອງອ່າງຮັບນ້ຳເທີນ-ນ້ຳກະດິງ ໄດ້ຈັດຂຶ້ນ ໃນວັນທີ 8 ພຶດສະພາ 2017 ທີ່ຫ້ອງປະຊຸມ ຂອງຫ້ອງວ່າການປົກຄອງເມືອງ ເມືອງປາກກະດິງ ແຂວງບໍລິຄຳໄຊ ໂດຍການເປັນປະທານຮ່ວມຂອງ ທ່ານ ຄ□າດີ ພິມມະສອນ ຮອງຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ (ຜູ້ຊີ້ນຳໂຄງການ) ແລະ ທ່ານ ທອງແດງ ຍັນວິໄລ ຫົວໜ້າຫ້ອງວ່າການປົກຄອງເມືອງປາກກະດິງ ເປີດກອງປະຊຸມຢ່າງເປັນທາງການ ພາຍຫຼັງທ່ານປະທານໄດ້ກ່າວເປີດກອງປະຊຸມ ແລະ ກ່າວຕ້ອນຮັບແຂກທີ່ມາຈາກ ແຂວງຄຳມ່ວນ,ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ບັນດາເມືອງທີ່ນອນພາຍໃນອ່າງຮັບນ້ຳເທີນ-ນ້ຳກະດິງ ແລະ ຫ້ອງການຕ່າງໆທີ່ກ່ຽວຂ້ອງແລ້ວ ສະເໜີໃຫ້ເຈົ້າຂອງໂຄງການຂຶ້ນນຳສະເໜີກ່ຽວກັບ ບົດສະຫຼຸບປະຈຳປີຂອງໂຄງການທີ່ໄດ້ຈັດຕັ້ງປະຕິບັດ 1 ປີຜ່ານມາຂອງໂຄງການເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 23 ຄົນ ຍິງ 6ຄົນ.

1.7 ໃນວັນທີ 25 ພຶດສະພາ 2017 ຢູ່ທີ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງໄດ້ຈັດກອງປະຊຸມປັບປຸງຖານຂໍ້ມູນກ່ຽວກັບການເກັບກຳຂໍ້ມູນທີ່ໄດ້ມາແລ້ວນັ້ນຈະນຳໃຊ້ເຂົ້າໂປແກຼມ ເອັກແຊວ ແນວໃດເພື່ອໃຫ້ເບິ່ງ ງ່າຍ ແລະ ມີຄວາມຖືກຕ້ອງ ພ້ອມດ້ວຍການສົນທະນາ ແລກປ່ຽນຄຳຄິດຄຳເຫັນລະຫວ່າງພາກສ່ວນເມືອງ ແລະ ຂະແໜງການ ທີ່ເຫັນວ່າມີສ່ວນພົວພັນກ່ຽວກັບ ຖານຂໍ້ມູນການນຳໃຊ້ຊັບພະຍາກອນນ້ຳ ແລະ ການປ່ອຍນ້ຳອອກຂອງໂຄງການພັດທະນາ ໃນອ່າງຮັບນ້ຳເທີນ-ນ້ຳກະດິງ ເຊິ່ງແມ່ນຂໍ້ມູນເກົ່າທີ່ໄດ້ມາຈາກຂະແໜງສິ່ງແວດລ້ອມ.

1.8 ໃນວັນທີ 29 ພຶດສະພາ 2017 ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືກັບກົມຊັບພະຍາກອນນ້ຳ ກ່ຽວກັບເລື່ອງຄະນະກຳມະການອ່າງຮັບນ້ຳເທີນ-ນ້ຳກະດິງ ທີ່ຕ້ອງໄດ້ມີການແບ່ງຄວາມຮັບຜິດຊອບລະຫວ່າງ 2 ແຂວງ ຄື ແຂວງບໍລິຄຳໄຊ ແລະ ແຂວງ ຄຳມ່ວນ ເພື່ອຈັດຕັ້ງປະຕິບັດກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະກຳມະການອ່າງຮັບນ້ຳຂອງແຂວງໃຜແຂວງລາວ ເພື່ອໃຫ້ສອດຄ່ອງກັບປະຈຸບັນ,ພ້ອມດຽວກັນນັ້ນກໍ່ໄດ້ມີການປຶກສາຫາລືກ່ຽວກັບວຽກງານຂອງອ່າງຮັບນ້ຳ-ອ່າງໂຕ່ງນ້ຳງຽບ ໂດຍສະເພາະແມ່ນຄວາມຮັບຜິດຊອບຂອງວຽກງານທີ່ຕິດພັນກັບພະແນກກະສິກຳ ແລະ ປ່າໄມ້, ພ້ອມດ້ວຍມີການປຶກສາຫາລືກ່ຽວກັບແບບແຜນການຄຸ້ມຄອງອ່າງຮັບນ້ຳເທີນ-ນ້ຳກະດິງ.

1.9 ໃນລະຫວ່າງວັນທີ 7-11 ມີຖຸນາ 2017 ໄດ້ລົງເກັບກຳຂໍ້ມູນທາງດ້ານເສດຖະກິດ ແລະ ສັງຄົມ ເຂດເມືອງປາກກະດິງ ຕາມແບບຟອມທີ່ກຳນົດຂຶ້ນຮ່ວມກັນລະຫວ່າງ ກົມຊັບພະຍາກອນນ້ຳ ແລະ ຂະແໜງຊັບພະຍາກອນນ້ຳເພື່ອມາເປັນຂໍ້ມູນໃສ່ແຜນຄຸ້ມຄອງອ່າງຮັບນ້ຳໃນອານາຄົດ ເພື່ອໃຫ້ສອດຄ່ອງ ແລະ ເປັນຂໍ້ມູນອັນໃໝ່ທີ່ຕ້ອງໄດ້ສັງລວມເພື່ອເອົາເຂົ້າແຜນຄຸ້ມຄອງອ່າງຮັບນ້ຳເທີນ-ນ້ຳກະດິງ ທີ່ໄດ້ກຳນົດໄວ້ ແລະ ເປັນສ່ວນໜຶ່ງທີ່ເຫັນວ່າມີຄວາມຈຳເປັນທີ່ຕ້ອງໄດ້ປັບປຸງຢ່າງຕໍ່ເນື່ອງ ເພື່ອຈະໄດ້ຮັບຮູ້ສະພາບແວດລ້ອມດ້ານຕ່າງໆ ທີ່ເກີດຂຶ້ນພາຍໃນອ່າງຮັບນ້ຳເທີນ-ນ້ຳກະດິງ.

1.10 ກອງປະຊຸມພົບປະແລກປ່ຽນບົດຮຽນ ໃນ 10 ແຂວງ ທີ່ໄດ້ຮັບທຶນ ຈາກກອງທຶນປົກປັກຮັກສາສິ່ງ ແວດລ້ອມ ປະຈຳປີ 2017 ໄດ້ຈັດຂຶ້ນ ໃນວັນທີ 28 ມີຖຸນາ 2017 ຢູ່ທີ່ ຫ້ອງປະຊຸມໂຮງຮຽນທິດສະດີການ ເມືອງ-ການປົກຄອງ ແຂວງບໍ່ແກ້ວ ໂດຍການເປັນປະທານຮ່ວມ ຂອງ ທ່ານ ຄຳໝັ້ນ ຈັນທະລິດ, ກຳມະການພັກແຂວງ, ຫົວໜ້າ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງບໍ່ແກ້ວ, ການເປັນປະທານຮ່ວມຂອງ ທ່ານ ຄຳປະດິດ ຄຳມູນເຮືອງ, ຄະນະພັກ ກຊສ, ຫົວໜ້າຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ທ່ານ ສຸກກະຕະ ວິຈິດ, ແຂກຮັບເຊີນ ໃນຖານະທີ່ປຶກສາຕໍ່ກອງປະຊຸມຄັ້ງນີ້. ຜູ້ແທນ ກອງປະຊຸມ, ຕົວແທນມາຈາກ ພະແນກ ຊສ ແລະ ພະແນກ ກະສິກຳ-ປ່າໄມ້ ຂອງ 10 ແຂວງ ທີ່ໄດ້ຮັບ

ທີມຈາກກອງທີມປົກປັກຮັກສາສິ່ງແວດລ້ອມ ຄື: ບໍ່ແກ້ວ, ຫຼວງນ້ຳທາ, ຜົ້ງສາລີ, ອຸດົມໄຊ, ຫົວພັນ, ໄຊຍະບູລີ , ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ອັດຕະປື. ນອກນີ້ຍັງມີ ຜູ້ແທນ ຈາກກົມ ຊັບພະຍາກອນນ້ຳ, ຊ່ຽວຊານເຄມີພາກວິຊາເຄມີ ຂອງຄະນະວິທະຍາສາດທຳມະຊາດ, ພ້ອມດ້ວຍ ກອງທີມປົກ ປັກຮັກສາສິ່ງແວດລ້ອມ ຊຶ່ງລວມທັງໝົດ ຈຳນວນ 130 ທ່ານ, ຍິງ 41 ທ່ານ.

1.11 ໄດ້ລົງຕິດຕາມ ແລະ ກວດກາຄຸນນະພາບນ້ຳຂອງສາຍນ້ຳເທີນ-ນ້ຳກະດິງ ຕາມຈຸດຕ່າງໆທີ່ໄດ້ ກຳນົດໄວ້ໃນຄັ້ງກ່ອນເພື່ອຊອບຫາທາດ ປົນເປື້ອນທີ່ມາກັບນ້ຳ ແລະ ສາຍເຄມີຕ່າງໆທີ່ມາຈາກໂຄງການ ພັດທະນາຕ່າງໆ ໃນວັນທີ 12-27 ກໍລະກົດ 2017 ຂອງ3ເມືອງ ຄື:ເມືອງປາກກະດິງ,ເມືອງຄຳເກີດ ແລະ ເມືອງວຽງທອງ ພາຍໃນອ່າງຮັບນ້ຳເທີນ-ນ້ຳກະດິງ ຕາມ 5 ຈຸດທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນ ແລະ ມີການ ຕິດຕາມຄຸນນະພາບນ້ຳຈຸດເກົ່າທຸກໆ 3 ເດືອນ ເພື່ອມາສົບທຽບກັນ ເພື່ອເປັນຂໍ້ມູນໃຫ້ແກ່ການພັດທະນາດ້ານ ຕ່າງໆພາຍໃນອ່າງນ້ຳເທີນ-ນ້ຳກະດິງ.

1.12 ໃນວັນທີ 7-10 ສິງຫາ 2017 ໄດ້ຈັດຝຶກອົບຮົມກ່ຽວກັບການຕິດຕາມ ແລະ ກວດກາຄຸນ ນະພາບນ້ຳຂັ້ນພື້ນຖານໃຫ້ແກ່ເມືອງ ໂດຍໄດ້ມີພະນັກງານຂອງຫ້ອງການ ຊສ ເມືອງປາກກະດິງ,ເມືອງຄຳເກີດ, ເມືອງວຽງທອງ ແລະ ເມືອງໄຊຈຳພອນ ເຂົ້າຮ່ວມ ການຝຶກອົບຮົມໂດຍແມ່ນພະນັກງານຂັ້ນແຂວງເປັນຄູຝຶກໃນ ຄັ້ງນີ້ ເພື່ອໃຫ້ ພະນັກງານພາຍໃນຫ້ອງການ ຊສ ຂອງແຕ່ລະເມືອງນັ້ນ ສາມາດກວດກາ ຄຸນນະພາບນ້ຳຂັ້ນ ພື້ນຖານໄດ້ເຊັ່ນ:ຄ່າອົງຊິເຈນໃນນ້ຳ,ຄ່າຄວາມເປັນກົດເປັນດ່ານ,ຄ່າອຸນນະພູມ ແລະ ຄ່າຊັກນຳໄຟຟ້າ.

1.13 ຈັດຝຶກອົບຮົມການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານໂດຍເອົາຮ່າງນ້ຳເທີນ-ນ້ຳ ກະດິງເປັນຕົວຢ່າງໃນການຝຶກອົບຮົມ ເຊິ່ງໄດ້ຈັດຂຶ້ນໃນວັນທີ 22-24 ສິງຫາ 2017 ເພື່ອສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃຫ້ແກ່ ນັກສຳມະນາກອນ ຂອງພາກສ່ວນແຂວງ ແລະ ເມືອງ ໃຫ້ຮູ້ເຖິງ ຫຼັກການ , ຂັ້ນ ຕອນ ແລະ ວິທີການຕ່າງໆ ໃນການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ເພື່ອເສີມສ້າງບັນດາ ຫຼັກການໃຫ້ສາມາດນຳໃຊ້ພາຍໃນອ່າງຮັບນ້ຳຍ່ອຍຂອງແຕ່ລະເມືອງ ເພື່ອວາງແຜນຄຸ້ມຄອງອ່າງຮັບນ້ຳຢ່າງເປັນ ລະບົບ.

1.14 ໄດ້ເຂົ້ຮ່ວມກອງປະຊຸມ ວັນທີ 29-30 ສິງຫາ 2017 ທີ່ຫ້ອງປະຊຸມ ຂອງຂະແໜງຊັບພະຍາ ກອນນ້ຳແຂວງ ຄຳມ່ວນ ໂດຍການເປັນປະທານຂອງ ທ່ານ ພອນໄຊ ສົມມະລາວົງ ຮອງຫົວໜ້າກົມ ຊັບພະຍາກອນນ້ຳ ແລະ ທ່ານ ສີປະໄທ ເຜົ່າພົງສະຫວັດ ຫົວໜ້າຂະແໜງຊັບພະຍາກອນນ້ຳ ແລະ ບັນດາແຂກ ຖືກເຊີນທີ່ມາແຕ່ຕ່າງແຂວງ ແລະ ເມືອງ ອ້ອມຂ້າງຂອງແຂວງຄຳມ່ວນ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຂອງ ແຂວງ ໂດຍມີຈຸດປະສົງແມ່ນເພື່ອວາງແຜນ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງອ່າງຮັບນ້ຳແບບປະສົມປະສານ ແລະ ເພື່ອເປັນການແລກປ່ຽນບົດຮຽນລະຫວ່າງແຂວງພາກກາງ ໃນການຄຸ້ມຄອງຊັບພະຍາກອນນ້ຳຂອງແຕ່ລະ ແຂວງໂດຍມີຜູ້ເຂົ້ຮ່ວມທັງໝົດ 20ຄົນ ຍິງ 5 ຄົນ.

1.15 ໄດ້ລົງຕິດຕາມ ແລະ ກວດກາຄຸນນະພາບນ້ຳຂອງສາຍນ້ຳຊັນ ຕາມຈຸດທີ່ໄດ້ກຳນົດໄວ້ ຕາມ ສາຍນ້ຳຊັນ ເພື່ອຊອກຫາທາດ ປົນເປື້ອນທີ່ມາກັບນ້ຳ ແລະ ສາຍເຄມີ ທີ່ເກີດຈາກໂຄງການພັດທະນາຕ່າງໆ ຢູ່ ລຽບຕາມສາຍນ້ຳຊັນໃນວັນທີ 11-13 ກັນຍາ 2017 ພາຍໃນອ່າງຮັບຊັນ ຈຳນວນ 4 ຈຸດ ທີ່ໄດ້ກຳນົດໄວ້ໃນ ເມື່ອກ່ອນ ແລະ ມີການຕິດຕາມຄຸນນະພາບນ້ຳຈຸດເກົ່າທຸກໆ 3 ເດືອນ ເພື່ອມາສົບທຽບກັນ ເພື່ອເປັນຂໍ້ມູນໃຫ້ ແກ່ການພັດທະນາດ້ານຕ່າງໆ ພາຍໃນອ່າງຮັບນ້ຳຊັນ ໂດຍສະເພາະແມ່ນດ້ານຊົນລະປະທານ ແລະ ອຸດສາຫະກຳ.

1.16 ໄດ້ລົງສຳຫຼວດ ແລະ ກຳນົດຈຸດກວດກາຄຸນນະພາບນ້ຳພາຍໃນອ່າງຮັບນ້ຳງຽງ ເພື່ອຕິດຕາມ ແລະ ຊອກຫາທາດປົນເປື້ອນທີ່ອາດຈະສົ່ງຜົນກະທົບຕໍ່ຄຸນນະພາບຂອງສາຍນ້ຳງຽງ ທີ່ເຫັນວ່າມີຄວາມສ່ຽງຕໍ່ສາຍນ້ຳງຽງ ທີ່ຈະຜົນກະທົບຕໍ່ສຸຂະພາບຂອງປະຊາຊົນພາຍໃນເຂດອ່າງນ້ຳງຽງ ເຊິ່ງໄດ້ລົງກຳນົດຈຸດ ໃນວັນທີ 12-19 ກັນຍາ 2017 ໂດຍໄດ້ມີການສົມທົບກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຂອງສອງເມືອງ ເພື່ອກຳນົດຈຸດເກັບຕົວຢ່າງນ້ຳຮ່ວມກັນ ແລະ ໄດ້ກຳນົດຈຸດໃນການເກັບຕົວຢ່າງ 3 ຈຸດ ທີ່ເຫັນວ່າມີຄວາມຈຳເປັນແທ້ຕ້ອງໄດ້ມີການກວດກາເພື່ອຊອກຫາທາດສານເຄມີຕ່າງກ່ອນທີ່ມາກັບນ້ຳ ເຊັ່ນ:ຈຸດທີ່1ບ້ານ ຫ້ວຍສຸບ ເມືອງບໍລິຄັນ,ຈຸດທີ່2 ບ້ານຊົມຊື່ນ ເມືອງບໍລິຄັນ,ຈຸດທີ່3 ບ້ານນ້ຳງຽງ ເມືອງ ປາກຊັນ.

1.17 ໄດ້ເຂົ້າຮ່ວມກອງປະຊຸມ ໃນວັນທີ 9-10 ພະຈິກ 2017 ທີ່ ແຂວງ ຫົວພັນ ເພື່ອເປັນການແລກປ່ຽນບົດຮຽນການຄຸ້ມຄອງອ່າງແມ່ນ້ຳຊຳ ແລະ ການຄຸ້ມຄອງອ່າງແມ່ນ້ຳເທີນ-ນ້ຳກະດິງ ໂດຍການເປັນປະທານຂອງ ທ່ານ ພອນສິນ ພົມປານດາ ຮອງຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຫົວພັນ ແລະ ທ່ານ ກົ່ງຄຳ ມະນີວົງ ຮອງກົມຊັບພະຍາກອນນ້ຳ ໃຫ້ກຽດເປັນປະທານ ໃນນັ້ນມີ 2 ແຂວງເຂົ້າຮ່ວມຄື:ແຂວງບໍລິຄຳໄຊ ,ແຂວງບໍ່ແກ້ວ ພ້ອມດ້ວຍ ຫົວໜ້າຂະແໜງ ຮອງຂະແໜງຈາກພາຍໃນພະແນກ ຊສ ແຂວງຫົວພັນ ເຂົ້າຮ່ວມ,ນອກນັ້ນຍັງໄດ້ຝຶກອົບຮົມກ່ຽວກັບການນຳໃຊ້ເຄື່ອງກວດກາຄຸນນະພາບນ້ຳ ຂອງແຂວງຫົວພັນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ແມ່ນ 28 ຄົນ ຍິງ 3 ຄົນ.

II. ການຈັດຕັ້ງປະຕິບັດ ກິດຈະກຳປີ 2017 ຕາມອົງປະກອບ

ລ/ດ	ລາຍການ	ຫ/ໜ	ຈ/ນ	ໝາຍເຫດ	
				ເຮັດແລ້ວ	ຍັງ
A	**ອົງປະກອບ1. ສ້າງຄວາມອາດສາມາດ**				
1	ເຂົ້າຮ່ວມກອງປະຊຸມນຳ ກປສ	ຄັ້ງ	2	100%	
2	ເຂົ້າຮ່ວມກອງປະຊຸມທີ່ແຂວງຄຳມ່ວນ	ຄັ້ງ	2	100%	
3	ກອງປະຊຸມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານຂັ້ນແຂວງ ແລະ ເມືອງ	ຄັ້ງ	2	100%	
4	ເຂົ້າຮ່ວມກອງປະຊຸມທີ່ ແຂວງບໍ່ແກ້ວ ແລະ ແຂວງຫົວພັນ	ຄັ້ງ	2	100%	
5	ຝຶກອົບຮົມການນຳໃຊ້ເຄື່ອງກວດກາຄຸນນະພາບນ້ຳ	ຄັ້ງ	1	100%	
6	ຝຶກອົບຮົມການຕິດຕາມກວດກາຄຸນນະພາບນ້ຳ ຂັ້ນພື້ນຖານ	ຄັ້ງ	1	100%	

7	ເຂົ້າຮ່ວມກອງປະຊຸມປຶກສາຫາລືກັບກົມຊັບພະຍາກອນນ້ຳ	ຄັ້ງ	1	100%	
B	**ອົງປະກອບ2. ສະໜັບສະໜູນວຽກງານພາກສະໜາມ**				
1	ລົງສຳຫຼວດ ແລະ ກຳນົດຈຸດ ກວດກາຄຸນນະພາບນ້ຳ ອ່າງຮັບນ້ຳເທິນ-ນ້ຳກະດິງ	ຄັ້ງ	1	100%	
2	ລົງສຳຫຼວດຈຸດກວດກາຄຸນນະພາບນ້ຳ ຂອບເຂດອ່າງນ້ຳເທິນ-ນ້ຳກະດິງ	ຄັ້ງ	4	100%	ຍັງຕ້ອງໄດ້ມີການກວດກາທຸກໆ3ເດືອນ
3	ລົງເກັບກຳຂໍ້ມູນການນຳໃຊ້ຢາຂ້າຫຍ້າ ເຂດເມືອງຄຳເກີດ	ຄັ້ງ	1	80%	ອາດມີຄວາມຈຳເປັນ ຕ້ອງລົງເກັບຂໍ້ມູນເພີ່ມເຕີມ
4	ລົງສຳຫຼວດບັນດາກິດຈະກຳທີ່ມີຄວາມສ່ຽງເຮັດໃຫ້ເກີດມົນລະພິດທາງນ້ຳ	ຄັ້ງ	2	100%	
5	ລົງສຳຫຼວດຈຸດກວດກາຄຸນນະພາບນ້ຳຊັນ	ຄັ້ງ	1	100%	
6	ລົງເກັບກຳຂໍ້ມູນດ້ານເສດຖະກິດ ແລະ ສັງຄົມເຂດ ເມືອງປາກກະດິງ	ຄັ້ງ	1	100%	
7	ລົງກວດກາຄຸນນະພາບນ້ຳ ສາຍນ້ຳຊັນ	ຄັ້ງ	2	50%	
8	ລົງສຳຫຼວດຈຸດກວດກາຄຸນນະພາບນ້ຳ ສາຍນ້ຳງຽບ	ຄັ້ງ	1	100%	
9	ລົງຕິດຕາມໂຄງການພັດທະນາຕ່າງໆ	ຄັ້ງ	1	50%	ຍັງຕ້ອງໄດ້ລົງຕິດຕາມຢ່າງເປັນປົກກະຕິ
C	**ອົງປະກອບ 3. ການບໍລິຫານ ແລະ ຄຸ້ມຄອງໂຄງການ**				
1	ຈັດຊື້ເຄື່ອງຮັບໃຊ້ ຫ້ອງການ	ຄັ້ງ	1	100%	
2	ຮັກສາສະພາບບັນຊີ	ຄັ້ງ	9	100%	

III. ສະຫຼຸບ

1. ຜົນງານໃນປີ 2017 ເຫັນວ່າເປັນທີ່ພໍໃຈ ຊຶ່ງສະແດງອອກຈາກຜົນງານທີ່ໄດ້ຈັດຕັ້ງປະຕິບັດວຽກງານຕົວຈິງທີ່ໄດ້ເປັນໄປຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ກຳນົດໄວ້ໃນແຜນການທຸກໆຢ່າງ.

2. ໃນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການໃນແຕ່ລະດ້ານແມ່ນໄດ້ຮັບຜົນດີ ເທົ່າທີ່ຄວນ ເຊິ່ງມັນສາມາດສະແດງອອກໃນການລາຍງານຄວາມຄືບໜ້າຂອງແຕ່ລະໄຕມາດຂອງໂຄງການມີການສະຫຼຸບ ທາງດ້ານໂຄງການເປັນແຕ່ລະງວດ ແລະ ເປັນປີ ພ້ອມການ ຈັດຕັ້ງປະຕິບັດການຄຸ້ມຄອງທາງດ້ານການເງິນ ແມ່ນສາມາດຈັດຕັ້ງປະຕິບັດໄດ້ ປະມານ 95% ແລະ ສາມາດສະຫຼຸບໄດ້ຕາມລະບຽບການຂອງກະຊວງການເງິນວ່າງອອກ.

3.1 ດ້ານດີ

- ການຄຸ້ມຄອງໂຄງການໂດຍລວມແມ່ນໄດ້ຮັບການຊີ້ນຳຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເຊິ່ງມີຄະນະພະແນກເປັນຜູ້ຊີ້ນຳ ຊຶ່ງສາມາດເຮັດໃຫ້ໂຄງການເຄື່ອນໄຫວໄດ້ຢ່າງມີປະສິດທິຜົນສູງ ແລະ ໄດ້ຮັບການຮ່ວມມືຈາກພາກສ່ວນທີ່ກ່ຽວຂ້ອງ.
- ຍ້ອນໄດ້ຮັບການຊີ້ນຳ-ນຳພາຈາກກອງທຶນປົກປັກຮັກສາສິ່ງແວດລ້ອມໂດຍສະເພາະທາງດ້ານວິຊາການ ແລະ ຍົກລະດັບຄວາມຮູ້ໃຫ້ແກ່ພະນັກງານການເງິນໃນການສະຫຼຸບເພື່ອໃຫ້ທັນກັບແຜນການທີ່ໄດ້ວາງໄວ້.

3.2 ດ້ານອ່ອນ

- ການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງຍັງບໍ່ທັນໄດ້ດີ,ການເຂົ້າຮ່ວມຂອງມວນຊົນບໍ່ທັນເປັນລະບົບ ແລະ ໜັກໜ້ວນ
- ຄວາມຮັບຮູ້ ແລະ ປະສົບການໃນການດຳເນີນໂຄງການ,ການບໍລິຫານຂອງບຸກຄະລາກອນຍັງມີຄວາມຈຳກັດໃນບາງດ້ານໂດຍສະເພາະ ໃນການຄຸ້ມຄອງທາງດ້ານການເງິນ ຍັງມີອັນກະຕຸກກະຕັກ,ການເຮັດບົດລາຍງານຍັງບໍ່ທັນໄດ້ດີເທົ່າທີ່ຄວນ ແລະ ປະສົບປະການຍັງບໍ່ທັນຫຼາຍເທົ່າທີ່ຄວນ.

IV. ແຜນການຈັດຕັ້ງປະຕິບັດ 2018

ແຜນປີ 2018 ຂອງໂຄງການຄຸ້ມຄອງອ່າງຮັບນ້ຳ ນ້ຳເທີນ-ນ້ຳກະດິງ ແມ່ນອີງໃສ່ ແຜນ 5 ປີ ຂອງໂຄງການທີ່ໄດ້ອອກແບບໃນເບື້ອງຕົ້ນ ແລະ ຖືກຕ້ອງຕາມແຜນ 5 ປີ ຂອງກອງທຶນປົກປັກຮັກສາສິ່ງແວດລ້ອມທີ່ໄດ້ກຳນົດຮ່ວມກັນກັບ ໂຄງການ ແລະ ມີແຜນດັ່ງຕໍ່ໄປນີ້:

4.1 ແຜນຄາດຄະເນລາຍຈ່າຍຕາມປະເພດລາຍຈ່າຍ ປີ 2018

ລດ	ລາຍການ	ຈ/ນ	ລາຄາ ຫົວໜ່ວຍ	ປີ 2017 ກີບ
1	**ສ້າງຄວາມອາດສາມາດ**			**42,000,000**
1.1	ການແລກປ່ຽນບົດຮຽນກັບໂຄງການຍ່ອຍອື່ນໆ ໃນປະເທດ	1		10,000,000

1.2	ເຂົ້າຮ່ວມກອງປະຊຸມ,ຝຶກອົບຮົມການຄຸ້ມຄອງໂຄງການ ຮ່ວມກັບໂຄງການຍ່ອຍ ແລະ ກປສ ຈັດຂຶ້ນ.	1		12,000,000
1.3	ຕິດຕາມກວດກາຄຸນນະພາບນ້ຳ ອ່າງແມ່ນ້ຳເທີນ-ນ້ຳກະດິງ 8 ຈຸດ, ນ້ຳຊັນ 2 ຈຸດ ແລະ ນ້ຳງຽບ 2 ຈຸດ ແລະ ຕິດຕາມຢາປາບສັດຕູພືດ ພາຍໃນ ແຂວງ	2	10,000,000	20,000,000
2	**ສະໜັບສະໜູນວຽກງານພາກສະໜາມ**			**72,900,000**
2.1	ເດີນທາງເກັບກຳຂໍ້ມູນ ແລະ ຄ່າເດີນທາງ	2	20,000,000	40,000,000
2.2	ຕິດຕາມໂຄງການພັດທະນາຕ່າງໆ ພາຍໃນອ່າງແມ່ນ້ຳເທີນ-ນ້ຳກະດິງ ຢ່າງເປັນລະບົບ	1		15,000,000
2.3	ກຳນົດຈຸດເກັບກຳຂໍ້ມູນກ່ຽວກັບ ປະລິມານນ້ຳ ແລະ ຄຸນນະພາບນ້ຳ [ເຂດນ້ຳເທີນ 2 (ສົມທົບກັບນ້ຳເທີນ 2), ເຂດນ້ຳມ່ວນ-ນ້ຳຍ້ອງ (ສົມທົບກັບເທີນຫີນບູນພາກຂະຫຍາຍ), ເຂດອ່າງນ້ຳເທີນຫີນບູນ (ໂຄງການນ້ຳຫີນບູນແຂວງຄຳມ່ວນ)]	1		10,000,000
2.4	ປັບປຸງຖານຂໍ້ມູນໂຄງການພັດທະນາຢູ່ແຂວງບໍລິຄຳໄຊ ໂດຍແຍກເປັນອ່າງນ້ຳ, ປ່າສະຫງວນ, ເມືອງ, ແຂວງ ແລະອື່ນໆ. ພາຍໃນອ່າງແມ່ນ້ຳເທີນ-ນ້ຳກະດິງ	1		7,900,000
3	**ບໍລິຫານ ແລະ ຄຸ້ມຄອງໂຄງການ**			**7,000,000**
3.1	ນຳໃຊ້ບຳລຸງຮັກສາພາຫະນະ ແລະ ອຸປະກອນ	1		2,000,000
3.2	ອຸປະກອນຮັບໃຊ້ຫ້ອງການຕ່າງໆ	1		5,000,000
	ລາຄາລວມທັງໝົດ			**121,900,000**

4.2 ແຜນລາດລະເນລາຍຈ່າຍຕາມອົງປະກອບ ປີ 2018

ລາຍການ	ປີ 2018 (ກີບ)
ອົງປະກອບ 1. ສ້າງຄວາມອາດສາມາດ	42,000,000
ອົງປະກອບ2. ສະໜັບສະໜຸນວຽກງານພາກສະໜາມ	72,900,000
ອົງປະກອບ 3. ການບໍລິຫານ ແລະ ຄຸ້ມຄອງໂຄງການ	7,000,000
ລວມທັງໝົດ	121,900,000

ບໍລິຄຳໄຊ ວັນທີ..29/11/2018.....

ຢັ້ງຢືນ

ຫົວໜ້າພະແນກ ຊສ ແຂວງ

ຜູ້ສະຫຼຸບ

ຄຳປະເສີດ ແກ້ວມະນີ

Mr Khampaseuth KEOMANY

ຮູບພາບທີ່ເຄື່ອນໄຫວ ໃນປີ2017

ຮູບ:1 ກອງປະຊຸມປະຈຳປີ ທີ່ແຂວງຄຳມ່ວນ

ຮູບ:2 ກ□ານິດຈຸດ ແລະ ກວດກາຄຸນນະພາບນ້ຳ

ຮູບ:3 ກວດກາຄຸນນະພາບນ້ຳ ໃນຫ້ອງທົດລອງ

ຮູບ:4 ກອງປະຊຸມ ທີ່ແຂວງຫົວພັນ

ຮູບ:5 ກວດກາຄຸນນະພາບນ້ຳ ສາຍນ້ຳຊັນ

ຮູບ:6 ກອງປະຊຸມປຶບປະກັບກົມຊັບພະຍາກອນນ້ຳ